ແຜນງານບົດວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR









## Spoken Lao supports more children to learn and take part in class

## Media Report
**28 Apr – 22 June 2026**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ ຕາງໜ້າໃຫ້ລັດຖະບານອົດສະຕຣາລີ ແລະ ລັດຖະບານສະຫະລັດອາເມລິກາ
Basic Education Quality and Access in Lao PDR is managed by Tetra Tech International Development
on behalf of the Australian Government and United States Government.

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2026-04-30 | Newspaper | Pasaxon | Page 12 |
| 2026-05-11 | Newspaper | Pathedlao | Front and page 4 |
| 2026-05-24 | Newspaper | Vientiane Mai | Page 2 |
| 2026-04-28 | Social media | Lao Sports Media Facebook | 32K Followers |
| 2026-04-29 | Social media | Xiangkhouang Mixay Newspaper Facebook | 9.6K Followers |
| 2026-04-29 | Social media | Education Science and Sports News Facebook | 1.7K Followers |
| 2026-04-30 | Social media | Lao Sport Media Facebook | 15K Followers |
| 2026-04-30 | Social media | Education Development of Laos, Group in Facebook | 36.0K Members |
| 2026-04-30 | Social media | Teacher Education, Group in Facebook | 9.2K Members |
| 2026-05-01 | Social media | Edu-Radio Online Facebook | 28 Followers |
| 2026-05-01 | Social media | LNR Infotainment (Lao National Radio) Facebook | 5.3K Followers |
| 2026-05-05 | Social media | Khangkhay Teacher Training College Facebook | 1.4K Followers |
| 2026-05-05 | Social media | Edu-Sport TV online Facebook | 82K Followers |
| 2026-05-05 | Social media | Lao PSTV (Public Security Newspaper) Facebook | 290K Followers |
| 2026-05-06 | Social media | Savannakhet TV Facebook | 84K Followers |
| 2026-05-08 | Social media | Luang Namtha TV Facebook | 61K Followers |
| 2026-05-08 | Social media | Lao Sports Media Facebook | 32K Followers |
| 2026-05-08 | Social media | Pathedlao Facebook | 394K Followers |
| 2026-05-10 | Social media | Public Security Newspaper Facebook | 183K Followers |
| 2026-05-23 | Social media | Australia in Laos Facebook | 51K Followers |
| 2026-05-23 | Social media | Vientiane Mai Facebook | 53K Followers |
| 2026-05-25 | Social media | Lao Youth Radio FM 90.00 MHz | 748K Followers |
| 2026-05-25 | Social media | Luang Namtha Teacher Training College Facebook | 1.4K Followers |
| 2026-04-29 | Website | BEQUAL | Read article in English here<br>Read article in Lao here |
| 2026-04-29 | Website | moes.edu.la | |
| 2026-06-22 | Website | Educationnews.la | Read article in Lao here |
| 2026-04-30 | Radio | Education news | |
| 2026-05-1 | Radio | Lao National Radio FM 103.7 | |
| 2026-05-5 | Radio | Lao Youth Radio FM 90.00 MHZ | |
| 2026-05-25 | Radio | Vientiane 9 Radio | |
| 2026-05-05 | TV | Lao ESTV | Watch the TV news here |

| | | | |
|---|---|---|---|
| 2026-05-05 | TV | Lao PSTV (Public Security Newspaper) | Watch the TV news here |
| 2026-05-06 | TV | Savannakhet TV | Watch the TV news here |
| 2026-05-08 | TV | Luang Namtha TV | Watch the TV news here |
| 2026-05-21 | TV | Lao National Television-English Program | Local News in Lao every Wednesday no link |
| 2026-04-30 | WhatsApp and Facebook | Nationwide Master and Provincial Trainers | 19 groups (per province) 706 members |
| 2026-04-30 | WhatsApp | Nationwide 18 PESS- 148 DESB (management and technical staff) | 18 groups (per province) 442 members |
| 2026-04-30 | WhatsApp | Nationwide 18 PESS in charge of grants (teacher dev, finance, general education) | 1 group<br>43 members |
| 2026-04-30 | WhatsApp | Nationwide TTC (director and technical staff) | 1 group<br>26 members |
| 2026-04-30 | WhatsApp | Phase 2 Target PESS and DESB (teacher dev units and coordinator) | 3 groups (per TTC catchment areas)<br>105 members |
| 2026-04-30 | WhatsApp | Phase 2 Target TTC CPD coordinators | 3 groups (per TTC)<br>161 members |
| 2026-04-30 | WhatsApp | Phase 2 Internal Pedagogical support | 30 groups (per district)<br>1,127 members |
| 2026-04-30 | WhatsApp | Phase 1 Target PESS and DESB in charge of monitoring (teacher dev, monitoring, finance) | 5 groups (per province)<br>127 members |

## Pictures of articles in the media

| | | | |
|---|---|---|---|
| 2026-04-30 | Newspaper | Pasaxon | Page 12 |




| | | | |
|---|---|---|---|
| 2026-05-11 | Newspaper | Pathedlao | Front and page 4 |



| 2026-05-24 | Newspaper | Vientiane Mai | Page 2 |
|---|---|---|---|




# ສົ່ງເສີມການສອນບົດຮຽນເຝິກເວົ້າພາສາລາວ ປັບປຸງຜົນການຮຽນຂອງເດັກນ້ອຍ ໃຫ້ດີຂຶ້ນ



● ທ່ານ ປອ ວົງເພັດ ອຸດົມລິດ ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ (ສສກ) ແລະ ທ່ານ ໄມໂຄ ຄາຣີ ເລຂາເອກລັດສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ພ້ອມຄະນະ ເດີນທາງໄປຢ້ຽມຢາມແຂວງຫຼວງນ້ຳທາ ແຕ່ວັນທີ 27-29 ເມສາ 2026 ເພື່ອສັງເກດການສອນບົດຮຽນເຝິກເວົ້າພາສາລາວ ໃນໂຮງຮຽນປະຖົມຫຼາຍແຫ່ງ ແລະ ພົບປະ ຄູ-ອາຈານຜູ້ອຳນວຍການໂຮງຮຽນ ຜູ້ເຮັດວຽກສຶກສານິເທດພາຍໃນ ແລະ ພາຍນອກ ພະນັກງານຫ້ອງການ ສສກ ເມືອງ ພະແນກ ສສກ ແຂວງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອປຶກສາຫາລືກ່ຽວກັບຄວາມຄືບໜ້າ ແລະ ສິ່ງທ້າທາຍ ພ້ອມທັງການສະໜັບສະໜູນຂັ້ນໂຮງຮຽນ ແລະ ສິ່ງທີ່ຄູຕ້ອງການ ເພື່ອປັບປຸງຜົນການຮຽນຂອງເດັກນ້ອຍ ໃຫ້ດີຂຶ້ນຢ່າງຕໍ່ເນື່ອງ.

ສື່ ການຮຽນ-ການສອນ ເຝິກເວົ້າພາສາລາວ ຖືກອອກແບບມາເພື່ອຊ່ວຍເດັກທີ່ເລີ່ມເຂົ້າຮຽນ ແຕ່ບໍ່ສາມາດເວົ້າພາສາລາວ ໄດ້ດີ ບົດຮຽນເຝິກເວົ້າພາສາລາວ ແມ່ນສື່ການສອນເສີມ ແຕ່ສອດຄ່ອງກັບບົດຮຽນພາສາລາວ ໃນຫຼັກສູດຊັ້ນ ປ1 ທີ່ໄດ້ສອນໃນຕອນບ່າຍຢ່າງໜ້ອຍ 3 ມື້ຕໍ່ອາທິດ ແລະ ແຕ່ລະບົດຮຽນຂອງທັງໝົດ 30 ບົດ ແມ່ນສອດຄ່ອງກັບບົດຮຽນວິຊາພາສາລາວ 30 ບົດ ບົດຮຽນເຫຼົ່ານີ້ ໃຫ້ເວລາເພີ່ມ ແລະ ຊ່ວຍສະໜັບສະໜູນແກ່ເດັກ ເພື່ອເສີມສ້າງທັກສະພາສາລາວ ຂອງເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າສາມາດເຂົ້າໃຈສິ່ງທີ່ຄູສອນ ສາມາດເຂົ້າຮ່ວມກິດຈະກຳໃນຫ້ອງຮຽນ ແລະ ຮຽນວິຊາອື່ນໆໄດ້ດີຂຶ້ນ ບົດຮຽນເຝິກເວົ້າພາສາລາວ ແມ່ນສ່ວນໜຶ່ງທີ່ສຳຄັນຂອງຄວາມພະຍາຍາມ ເພື່ອສົ່ງເສີມການຮຽນຮ່ວມໃຫ້ຫຼາຍຂຶ້ນ ສຳລັບເດັກທີ່ມາຈາກພື້ນຖານພາສາທີ່ຫຼວງຫຼາຍ ວິທີການດັ່ງກ່າວ ໄດ້ຖືກທົດລອງໃຊ້ເປັນຄັ້ງທຳອິດໃນຫຼາຍແຂວງ ແລະ ຫຼັງຈາກຜົນໄດ້ຮັບໃນທາງທີ່ດີ ໄດ້ຖືກນຳສະເໜີໃນລະດັບປະເທດ ໃນສົກຮຽນ 2024-2025 ປັດຈຸບັນ ວິທີການດັ່ງກ່າວ ກຳລັງຊ່ວຍນັກຮຽນ ຊັ້ນ ປ1 ໃນໂຮງຮຽນຕ່າງໆທຸກແຂວງ ທີ່ເດັກຫຼາຍຄົນ ຕ້ອງການການສະໜັບສະໜູນເປັນພິເສດ ເພື່ອຮຽນຮູ້ທັກສະພາສາລາວ ໃນຕອນເລີ່ມຕົ້ນການຮຽນຂອງເຂົາເຈົ້າ.

ທ່ານ ປອ ວົງເພັດ ອຸດົມລິດ ກ່າວວ່າ: ກະຊວງ ສສກ ແລະ ລັດຖະບານອົດສະຕຣາລີ ໄດ້ຮ່ວມມືກັນຢ່າງໃກ້ຊິດ ໂດຍຜ່ານແຜນງານບີຄວາ ເພື່ອເສີມສ້າງການຮຽນຮູ້ພາສາລາວ ສຳລັບເດັກນ້ອຍ ທີ່ເລີ່ມເຂົ້າຮຽນ ແຕ່ຍັງເວົ້າພາສາເຜົ່າຢູ່ເຮືອນ ສື່ ການຮຽນ-ການສອນ ເຝິກພາສາລາວ ຖືກທົດສອບໃນຫຼາຍແຂວງ ກ່ອນທີ່ຈະຂະຫຍາຍໄປທົ່ວປະເທດ ໃນສົກຮຽນ 2024-2025 ສິ່ງທີ່ພວກເຮົາເຫັນໃນຫ້ອງຮຽນ ສະແດງໃຫ້ເຫັນວ່າບົດຮຽນ ຊ່ວຍໃຫ້ເດັກນ້ອຍ ເວົ້າໄດ້ຢ່າງໝັ້ນໃຈ ເຂົ້າໃຈດີຂຶ້ນ ແລະ ມີສ່ວນຮ່ວມຢ່າງຫ້າວຫັນໃນການຮຽນ ໂດຍອີງໃສ່ຄວາມສຳເລັດຂອງການຈັດຕັ້ງປະຕິບັດໃນ ຊັ້ນ ປ1 ໂດຍການຮ່ວມມືຂອງທັງສອງຝ່າຍ ກຳລັງພັດທະນາບົດຮຽນສຳລັບ ຊັ້ນ ປ2 ດ້ວຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ບົດຮຽນທີ່ໄດ້ຮຽນຮູ້ຈາກຊັ້ນ ປ1 ກຳລັງຖືກນຳໃຊ້ ເພື່ອເຮັດໃຫ້ສື່ການຮຽນ-ການສອນ ໃໝ່ງ່າຍຂຶ້ນ ສຳລັບຄູ ແລະ ມີປະສິດທິພາບຫຼາຍຂຶ້ນສຳລັບນັກຮຽນ ສື່ການຮຽນການສອນດັ່ງກ່າວ ຈະພ້ອມນຳໃຊ້ໃນສົກຮຽນ 2027-2028 ພວກເຮົາໄດ້ຮັບຟັງຄຳຄິດເຫັນຈາກ ຄູ-ອາຈານ ແລະ ຜູ້ເຮັດວຽກສຶກສານິເທດວ່າການສະໜັບສະໜູນຕົວຈິງ ແລະ ເປັນປະຈຳ ສ້າງຄວາມແຕກຕ່າງຢ່າງແທ້ຈິງໃນການສອນປະຈຳວັນຂອງຄູ ໄດ້ຊ່ວຍໃຫ້ຄູປັບປຸງທັກສະຂອງເຂົາເຈົ້າ ເສີມສ້າງການສອນໃນຫ້ອງຮຽນ ແລະ ສະໜັບສະໜູນນັກຮຽນ ໄດ້ດີຂຶ້ນ ໂດຍສະເພາະຜູ້ທີ່ມີຄວາມຫຍຸ້ງຍາກໃນການຮຽນຮູ້ ເມື່ອຄູໄດ້ຮັບການສະໜັບສະໜູນເປັນຢ່າງດີ ເຂົາເຈົ້າຈະມີຄວາມໝັ້ນໃຈ ແລະ ມີປະສິດທິພາບໃນການສອນຫຼາຍຂຶ້ນ ສິ່ງນີ້ຊ່ວຍໃຫ້ນັກຮຽນທຸກຄົນ ໂດຍສະເພາະ ເດັກທີ່ຕ້ອງການການສະໜັບສະໜູນດ້ານພາສາເພີ່ມ ເມື່ອເລີ່ມເຂົ້າຮຽນ.

ທ່ານ ໄມໂຄ ຄາຣີ ກ່າວວ່າ: ການປັບປຸງຜົນຮຽນສຳລັບເດັກ ທີ່ເຂົ້າຮຽນໃນໂຮງຮຽນຊັ້ນປະຖົມ ແຕ່ບໍ່ສາມາດເວົ້າພາສາລາວ ທີ່ໃຊ້ໃນການສອນໄດ້ດີ ແມ່ນບັນຫາຄວາມສະເໝີພາບທີ່ສຳຄັນ ໂດຍມີປະມານ 40% ຂອງນັກຮຽນແມ່ນນັກຮຽນເວົ້າພາສາເຜົ່າ ທີ່ບໍ່ແມ່ນພາສາລາວ ເຝິກເວົ້າພາສາລາວ ສະແດງໃຫ້ເຫັນວ່າເປັນການທົດລອງທີ່ປະສົບຜົນສຳເລັດ ສາມາດຂະຫຍາຍເປັນວິທີການປະຕິບັດໃນທົ່ວປະເທດ ເຊິ່ງສະໜັບສະໜູນການຮຽນຮ່ວມ ລັດຖະບານອົດສະຕຣາລີ ມີຄວາມພູມໃຈທີ່ໄດ້ຮ່ວມມືກັບກະຊວງ ສສກ ໃນຄວາມພະຍາຍາມທີ່ສຳຄັນນີ້ ເມື່ອເດັກນ້ອຍມີທັກສະພາສາທີ່ເຂັ້ມແຂງແຕ່ຍັງນ້ອຍ ເຂົາເຈົ້າຈະສາມາດມີສ່ວນຮ່ວມ ແລະ ປະສົບຜົນສຳເລັດໃນໂຮງຮຽນໄດ້ດີຂຶ້ນ.

ການຢ້ຽມຢາມຄັ້ງນີ້ ໄດ້ເນັ້ນໃຫ້ເຫັນການຊ່ວຍເຫຼືອທີ່ຄູໄດ້ຮັບ ເພື່ອຊ່ວຍໃຫ້ເຂົາເຈົ້ານຳໃຊ້ສື່ ການຮຽນ-ການສອນ ເຝິກເວົ້າພາສາລາວ ໄດ້ຢ່າງມີປະສິດທິພາບ ພວກເຮົາໄດ້ສົນທະນາກ່ຽວກັບວິທີທີ່ຜູ້ເຮັດວຽກສຶກສານິເທດພາຍໃນ ໂດຍການຮ່ວມມືກັບວິທະຍາໄລຄູ ແລະ ຫ້ອງການ ສສກ ເມືອງ ສະເໜີການສະໜັບສະໜູນການພັດທະນາວິຊາຊີບຄູເປັນປະຈຳ ສາມາດປະຕິບັດໄດ້ ແລະ ເໝາະສົມກັບຄູ ການສະໜັບສະໜູນນີ້ ເກີດຂຶ້ນຜ່ານຫຼາຍວິທີການແຕກຕ່າງກັນ ເຊັ່ນ: ການສັງເກດການສອນໃນຫ້ອງຮຽນ ການສົນທະນາແບບເປັນທາງການ ແລະ ບໍ່ເປັນທາງການ ການສອນເປັນຄູ່ ການກວດສອບທາງໄກ ແລະ ການສົ່ງຂໍ້ຄວາມອັອດແອັບ ສ່ວນຫຼາຍຈະນຳໃຊ້ຊັບພະຍາກອນ ເຊັ່ນ: ໂມດູນຕ່າງໆໃນຊຸດອຸປະກອນຊ່ວຍເຫຼືອຄູ ແລະ ວິດີໂອສຳລັບການພັດທະນາຄູ ດ້ານເນື້ອໃນ ແລະ ຄຳແນະນຳດ້ານວິຊາການ ການສະໜັບສະໜູນ ໄດ້ດັດປັບເຂົ້າກັບຄວາມຕ້ອງການຂອງຄູແຕ່ລະຄົນ ນັບແຕ່ການແຕ່ງບົດສອນໄປ ຈົນເຖິງການນຳໃຊ້ເອກະສານ ແລະ ສື່ ການຮຽນ-ການສອນ ໃນຫ້ອງຮຽນ ຄູສາມາດຈື່ງນຳໃຊ້ທັກສະໃໝ່ໄດ້ທັນທີ ຮັບເອົາການຊ່ວຍເຫຼືອເຫຼົ່ານີ້ ຊ່ວຍໃຫ້ຄູ ສ້າງຄວາມໝັ້ນໃຈ ແລະ ແກ້ໄຂຄວາມຕ້ອງການການຮຽນຮູ້ ທີ່ແຕກຕ່າງກັນຂອງນັກຮຽນໃນຫ້ອງຮຽນໄດ້ດີຂຶ້ນ.

ທ່ານ ໄມໂຄ ຄາຣີ ກ່າວຕື່ມອີກວ່າ: ລັດຖະບານອົດສະຕຣາລີ ມີຄວາມພູມໃຈທີ່ໄດ້ສະໜັບສະໜູນ ກະຊວງ ສສກ ໃນການສ້າງລະບົບ ທີ່ຊ່ວຍໃຫ້ຄູ ສືບຕໍ່ຮຽນຮູ້ ແລະ ປັບປຸງຕົນເອງ ຄວາມກ້າວໜ້າທີ່ພວກເຮົາເຫັນໄດ້ໃນແຂວງຫຼວງນ້ຳທາ ສະແດງໃຫ້ເຫັນວ່າຄຸນນະພາບຂອງການສຶກສາຂັ້ນພື້ນຖານ ເລີ່ມຕົ້ນຈາກການສະໜັບສະໜູນຄູ ແລະ ຮັບປະກັນວ່າເດັກທຸກຄົນ ເຂົ້າເຖິງປະສົບການ ການຮຽນຮູ້ທີ່ມີຄຸນນະພາບ ແມ່ນເປັນການລົງທຶນທີ່ຄຸ້ມຄ່າໃນອະນາຄົດຂອງ ສປປ ລາວ ການຢ້ຽມຢາມຄັ້ງນີ້ໄດ້ຢືນຢັນຄວາມມຸ່ງໝັ້ນຮ່ວມກັນຂອງລັດຖະບານ ສປປ ລາວ ແລະ ລັດຖະບານອົດສະຕຣາລີ ໃນການສະໜັບສະໜູນການສຶກສາຮຽນຮ່ວມ ແລະ ຊ່ວຍໃຫ້ເດັກນ້ອຍ ມີໂອກາດປະສົບຜົນສຳເລັດໃນໂຮງຮຽນຫຼາຍຂຶ້ນ ລັດຖະບານທັງສອງ ມີວິໄສທັດອັນດຽວກັນວ່າການສຶກສາ ແມ່ນການລົງທຶນມີໝາກຜົນສຳຄັນທີ່ເປັນປະໂຫຍດຕໍ່ເດັກ ຊຸມຊົນ ແລະ ປະເທດຊາດ.

| | |
|---|---|
| **2026-04-28** | **Lao Sport Media Facebook** |




| | |
|---|---|
| **2026-04-29** | **Xiangkhouang Mixay Newspaper Facebook** |



| 2026-04-29 | Education Science and Sport News Facebook |
|---|---|

ຂ່າວສຶກສາ, ວິທະຍາສາດ ແລະ ກິລາ / Education Science And Sport News
April 29 at 9:07 AM ·

ສົ່ງເສີມການຮຽນການສອນຝຶກເວົ້າພາສາລາວ ໃຫ້ນັກຮຽນປະຖົມ ພາຍໃນເຂດຫຼວງນ້ຳທາ ຮຽນຮູ້ ມີສ່ວນຮ່ວມໃນການຮຽນໃນຫ້ອງຮຽນຫຼາຍຂຶ້ນ... See more




9

| 2026-04-30 | Education Development of Laos, Group in Facebook |
|---|---|

## ພັດທະນາການສຶກສາລາວ Education Development of Laos

Private group · 36.0K members

ສື່ການຮຽນການສອນຝຶກເວົ້າພາສາລາວໄດ້ຊ່ວຍໃຫ້ນັກຮຽນ ໄດ້ຮຽນຮູ້ ແລະ ມີສ່ວນຮ່ວມໃນການຮຽນໃນຫ້ອງຮຽນຫຼາຍຂຶ້ນ.

ອ່ານຂ່າວທີ່ລິ້ງນີ້:

https://bequal-laos.org/.../spoken-lao-supports-more.../...



BEQUAL-LAOS.ORG

ສື່ການຮຽນການສອນຝຶກເວົ້າພາສາລາວໄດ້ຊ່ວຍໃຫ້ນັກຮຽນ ໄດ້ຮຽນຮູ້ ແລະ ມີສ່ວນຮ່ວມໃນການຮຽນໃນຫ້ອງ

| 2026-04-30 | Teacher Education, Group in Facebook |
|---|---|




| 2026-05-01 | Edu-Radio Online Facebook |
|---|---|



| 2026-05-01 | LNR Infotainment (Lao National Radio) Facebook |
| --- | --- |




| 2026-05-05 | Khangkhay Teacher Training College Facebook |
| --- | --- |



| 2026-05-05 | Edu-Sport TV Online Facebook and TV |
| --- | --- |




**Edu-Sport TV online**

May 5 ·

ຄະນະຜູ້ແທນຈາກ ກະຊວງສຶກສາທິການ ແລະ ກິລາ (ສສກ) ແລະ ສະຖານທູດອົດສະຕຣາລີ ຕິດຕາມການສົ່ງເສີມ ການຮຽນການສອນ ຝຶກເວົ້າພາສາລາວ ໃຫ້ນັກຮຽນປະຖົມພາຍໃນແຂວງຫຼວງນໍ້າທາ

| 2026-05-05 | Lao PSTV (Public Security) Facebook and TV |
| --- | --- |




**ໂທລະພາບປ້ອງກັນຄວາມສະຫງົບ - laopstv**

May 5 ·

#ໂທລະພາບ ປກສ LaoPSTV News: ສື່ການຮຽນ-ການສອນຝຶກເວົ້າພາສາລາວ ໄດ້ຊ່ວຍໃຫ້ນັກຮຽນ ໄດ້ຮຽນຮູ້ ແລະ ມີສ່ວນຮ່ວມໃນການຮຽນ ໃນຫ້ອງຮຽນຫຼາຍຂຶ້ນ

| 2026-05-06 | Savannakhet TV Facebook and TV |
|---|---|




**ຂ່າວໂທລະພາບ /TVsavannakhet**
May 6 ·

ຄະນະຜູ້ແທນ ຈາກກະຊວງສຶກສາທິການ ແລະ ກິລາ ແລະ ສະຖານທູດອົດສະຕຣາລີ ຕິດຕາມການສົ່ງເສີມການຮຽນ-ການ ສອນຝຶກເວົ້າພາສາລາວ ຢູ່ແຂວງຫຼວງນໍ້າທາ

| 2026-05-08 | Luang Namtha TV Facebook and TV |
|---|---|




**ໂທລະພາບແຂວງຫລວງນໍ້າທາ**
May 8 ·

ຄະນະຜູ້ແທນຈາກກະຊວງສຶກສາທິການ ແລະ ກິລາ ແລະ ສະຖານທູດອົດສະຕຣາລີ ລົງຕິດຕາມການສົ່ງເສີມການຮຽນ ການສອນຢູ່ໂຮງຮຽນເປົ້າໝາຍ ຂອງໂຄງການ

| 2026-05-08 | Lao Sport Media Facebook (2nd times) |
|---|---|

Lao Sports Media
May 8 at 11:58 AM ·

ຄະນະຜູ້ແທນຈາກ ກະຊວງສຶກສາທິການ ແລະ ກິລາ (ສສກ) ແລະ ສະຖານທູດອົດສະຕຣາລີ ຕິດຕາມການສົ່ງເສີມ ການຮຽນການສອນ ຝຶກເວົ້າພາສາລາວ ພ້ອມທັງມອບອຸປະກອນການສຶກສາ ແລະ ກິລາ ສົ່ງເສີມນ້ອງນັກຮຽນ... See more




16 1 1

| 2026-05-10 | Pathedlao Facebook |
|---|---|

ປະເທດລາວ Pathedlao
May 10 at 10:20 AM ·

ຜູ້ແທນລາວ-ອົດຕຣາລີ ລົງສັງເກດການຜົນໄດ້ຮັບ
ຂອງສື່ການຮຽນ-ການສອນຝຶກເວົ້າພາສາລາວ ຂັ້ນ ປ1... See more



7 2

| 2026-05-11 | Public Security Facebook |
|---|---|

ຄວາມສະຫງົບ Lao Security News
May 11 ·

ສື່ການຮຽນການສອນຝຶກເວົ້າພາສາລາວ ໄດ້ຊ່ວຍໃຫ້ນັກຮຽນ ໄດ້ຮຽນຮູ້ ແລະ ມີສ່ວນຮ່ວມໃນການຮຽນໃນຫ້ອງຮຽນຫຼາຍຂຶ້ນ... See more




| 2026-05-23 | Australia in Laos Facebook |
|---|---|

Australia in Laos
1d ·

**Spoken Lao is transforming classrooms and empowering teachers - see it in action!** 📽️

ມາເບິ່ງນຳກັນວ່າ ການຮຽນ-ການສອນ ການຝຶກເວົ້າພາສາລາວ ສຳລັບຊັ້ນປ 1 ກຳລັງສ້າງການປ່ຽນແປງໃນຫ້ອງຮຽນ ແລະ ຊ່ວຍໃຫ້ຄູສາມາດສະໜັບສະໜູນນັກຮຽນທີ່ເວົ້າແຕ່ພາສາຊົນເຜົ່າຢູ່ເຮືອນ ໃຫ້ສາມາດເວົ້າພາສາລາວໄດ້ດີຂຶ້ນແນວໃດ. ການພັດທະນາວິຊາຊີບຄູແບບຕໍ່ເນື່ອງຢູ່ພາຍໃນໂຮງຮຽນ ແມ່ນກຳລັງສ້າງຄວາມແຕກຕ່າງຢ່າງແທ້ຈິງ — ເຊິ່ງເລີ່ມຈາກເທື່ອລະຫ້ອງຮຽນ.

ເມື່ອຄູໄດ້ຮັບການສະໜັບສະໜູນ, ເດັກນ້ອຍທຸກຄົນກໍ່ຈະມີໂອກາດໃນການຮຽນຮູ້. 💙
ອົດສະຕຣາລີ 🇦🇺 ມີຄວາມພາກພູມໃຈທີ່ໄດ້ສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ (ສສກ) ໃນການສ້າງລະບົບການສຶກສາທີ່ເຂັ້ມແຂງ ແລະ ທຸກຄົນມີສ່ວນຮ່ວມຫຼາຍຂຶ້ນ ສຳລັບ ສປປ ລາວ, ເພາະວ່າການສຶກສາທີ່ມີຄຸນນະພາບ ເລີ່ມຕົ້ນຈາກຄູທີ່ມີຄຸນນະພາບ.
---

Watch how Grade 1 Spoken Lao is transforming classrooms and empowering teachers to better support students who speak a language other than Lao at home. School-based professional development is making a real difference — one classroom at a time.

When teachers are supported, every child gets the opportunity to learn. 💙
Australia 🇦🇺 is proud to stand alongside Laos 🇱🇦 in building a stronger, more inclusive education system for Lao PDR, because quality education starts with quality teachers.

#Education #SpokenLao #AustraliaLao #QualityEducation #TeacherDevelopment #BEQUAL
See less



| 2026-05-25 | Vientiane Mai Facebook |
|---|---|




| 2026-05-25 | Lao Youth Radio FM 90.00 MHZ Facebook |
|---|---|



| 2026-05-25 | Luang Namtha Teacher Training College Facebook |
| --- | --- |

**ວິທະຍາໄລຄູ ຫຼວງນ້ຳທາ** is with **Hengthong Chomsaetuon** and **19 others**.
May 5 at 3:32 PM · 

ທ່ານ ຜູ້ອຳນວຍການ ວິທະຍາໄລຄູຫຼວງນ້ຳທາ  ພ້ອມດ້ວຍ ຄະນະນຳ, ຄູ-ອາຈານ ຕ້ອນຮັບ ການມາຢ້ຽມຢາມຂອງຄະນະ ຜູ້ແທນຈາກສະຖານທູດອົດສະຕຣາລີປະຈຳ ສປປ ລາວ

________________________________

ໃນຕອນເຊົ້າ ຂອງວັນທີ 29 ເມສາ 2026 ທີ່ຜ່ານມາ, ທ່ານ ອຈ. ປທ. ນາງ ນອນຈັນ ທິບພະວົງ ຜູ້ອຳນວຍການ ວິທະຍາໄລຄູຫຼວງນ້ຳທາ ພ້ອມດ້ວຍ ຄະນະນຳ, ຄູ-ອາຈານ ໄດ້ຕ້ອນຮັບການມາຢ້ຽມຢາມຂອງຄະນະຜູ້ແທນຈາກສະຖານທູດອົດສະຕຣາລີປະຈຳ ສປປ ລາວ. ພິທີດັ່ງກ່າວ ໄດ້ຈັດຂຶ້ນທີ່ ຫ້ອງປະຊຸມຂອງວິທະຍາໄລຄູຫຼວງນ້ຳທາ ໂດຍມີ  ທ່ານ ປອ. ວົງເພັດ ອຸດົມລິດ, ຜູ້ອ... See more



# ສື່ການຮຽນການສອນຝຶກເວົ້າພາສາລາວໄດ້ຊ່ວຍໃຫ້ນັກຮຽນ ໄດ້ຮຽນຮູ້ ແລະ ມີສ່ວນຮ່ວມໃນການຮຽນໃນຫ້ອງຮຽນຫຼາຍຂຶ້ນ

POSTED ON 30 ເດືອນເມສາ 2026



ຄະນະຜູ້ແທນຈາກກະຊວງສຶກສາທິການ ແລະ ກິລາ ແລະ ສະຖານທູດອົດສະຕຣາລີ ໄດ້ຢ້ຽມຢາມໂຮງຮຽນປະຖົມໃນແຂວງຫຼວງນໍ້າທາ ເພື່ອສັງເກດການຜົນໄດ້ຮັບຂອງສື່ການຮຽນການສອນຝຶກເວົ້າພາສາລາວ ຂັ້ນ ປ.1

ຄະນະຜູ້ແທນນຳໂດຍ ທ່ານ ປອ. ອົງເພັດ ອຸດົມລິດ, ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ), ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ (ສສກ) ແລະ ທ່ານ ໄມໂຄ ຄາຣີ, ເລຂາເອກສະຖານທູດອົດສະຕຣາລີ, ໄດ້ຢ້ຽມຢາມແຂວງຫຼວງນໍ້າທາ ໃນລະຫວ່າງວັນທີ 27 ຫາ 29 ເມສາ 2026 ເພື່ອຮັບຮູ້ກ່ຽວກັບການຈັດຕັ້ງປະຕິບັດສື່ການຮຽນການສອນຝຶກເວົ້າພາສາລາວ ຂັ້ນ ປ.1. ການຢ້ຽມຢາມດັ່ງກ່າວຍັງໄດ້ສະແດງໃຫ້ເຫັນວ່າ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂັ້ນໂຮງຮຽນ ຊ່ວຍໃຫ້ຄູອາຈານຈັດຕັ້ງປະຕິບັດການສອນບົດຮຽນຝຶກເວົ້າພາສາລາວ ແລະ ໃຫ້ການຊ່ວຍເຫຼືອນັກຮຽນທີ່ເວົ້າພາສາເຜົ່າທີ່ບໍ່ແມ່ນພາສາລາວຢູ່ເຮືອນ ໃຫ້ມີສ່ວນຮ່ວມ ແລະ ຮຽນຢູ່ໂຮງຮຽນໄດ້ຫຼາຍຂຶ້ນ.

ຄະນະຜູ້ແທນປະກອບມີ ຜູ້ຕາງໜ້າຈາກສູນຄົ້ນຄວ້າພາສາລາວສຳລັບຊົນເຜົ່າ, ສວສ, ກົມແຜນການ, ກົມສ້າງຄູ, ພະແນກປະຖົມ ແລະ ການສຶກສາຮຽນຮ່ວມ, ກົມສາມັນສຶກສາ, ສະຖານທູດອົດສະຕຣາລີ ແລະ ຜູ້ຊ່ຽວຊານ ແຜນງານບີຄວາ.

ໃນລະຫວ່າງການຢ້ຽມຢາມ, ຄະນະຜູ້ແທນໄດ້ສັງເກດການສອນບົດຮຽນຝຶກເວົ້າພາສາລາວໃນໂຮງຮຽນປະຖົມຫຼາຍແຫ່ງ ແລະ ໄດ້ພົບປະກັບຄູອາຈານ, ຜູ້ອຳນວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດພາຍໃນ ແລະ ພາຍນອກ, ພະນັກງານຫ້ອງການສຶກສາທິການ ແລະ ກິລາ ເມືອງ (ສກມ) ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ (ສກຂ) ພ້ອມດ້ວຍທີມງານວິຊາການ ແລະ ທີມງານຜູ້ປະສານງານຫຼັກ ຈາກວິທະຍາໄລຄູ. ຄະນະຜູ້ແທນໄດ້ປຶກສາຫາລື ກ່ຽວກັບຄວາມຄືບໜ້າ ແລະ ສິ່ງທ້າທາຍ, ພ້ອມທັງການສະໜັບສະໜູນຂັ້ນໂຮງຮຽນ ແລະ ສິ່ງທີ່ຄູຕ້ອງການ ເພື່ອປັບປຸງຜົນການຮຽນຂອງເດັກນ້ອຍໃຫ້ດີຂຶ້ນຢ່າງຕໍ່ເນື່ອງ.

ສື່ການຮຽນການສອນຝຶກເວົ້າພາສາລາວ ຖືກອອກແບບມາເພື່ອຊ່ວຍເດັກທີ່ເລີ່ມເຂົ້າຮຽນ ແຕ່ບໍ່ສາມາດເວົ້າພາສາລາວໄດ້ດີເທື່ອ. ບົດຮຽນຝຶກເວົ້າພາສາລາວແມ່ນສື່ການສອນເສີມ, ແຕ່ສອດຄ່ອງກັບບົດຮຽນພາສາລາວໃນຫຼັກສູດ ຂັ້ນ ປ.1 ທີ່ໄດ້ສອນໃນຕອນບ່າຍຢ່າງໜ້ອຍສາມມື້ຕໍ່ອາທິດ ແລະ ແຕ່ລະບົດຮຽນຂອງທັງໝົດ 30 ບົດ ແມ່ນສອດຄ່ອງກັບບົດຮຽນວິຊາພາສາລາວ 30 ບົດ. ບົດຮຽນເຫຼົ່ານີ້ ໃຫ້ເວລາເພີ່ມ ແລະ ຊ່ວຍສະໜັບສະໜູນແກ່ເດັກເພື່ອເສີມສ້າງທັກສະພາສາລາວຂອງເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າສາມາດເຂົ້າໃຈສິ່ງທີ່ຄູສອນ, ສາມາດເຂົ້າຮ່ວມກິດຈະກຳໃນຫ້ອງຮຽນ ແລະ ຮຽນວິຊາອື່ນໆໄດ້ດີຂຶ້ນ. ບົດຮຽນຝຶກເວົ້າພາສາລາວແມ່ນສ່ວນໜຶ່ງທີ່ສຳຄັນຂອງຄວາມພະຍາຍາມ ເພື່ອສົ່ງເສີມການຮຽນຮ່ວມໃຫ້ຫຼາຍຂຶ້ນ ສຳລັບເດັກທີ່ມາຈາກພື້ນຖານພາສາທີ່ຫຼາກຫຼາຍ.

ວິທີການດັ່ງກ່າວໄດ້ຖືກທົດລອງໃຊ້ເປັນຄັ້ງທຳອິດໃນຫຼາຍແຂວງ ແລະ ຫຼັງຈາກຜົນໄດ້ຮັບໃນທາງທີ່ດີ ໄດ້ຖືກນຳສະເໜີໃນລະດັບປະເທດໃນປີຮຽນ 2024–2025. ປັດຈຸບັນນີ້, ວິທີການດັ່ງກ່າວກຳລັງຊ່ວຍນັກຮຽນ ຂັ້ນປ.1 ໃນໂຮງຮຽນຕ່າງໆໃນທຸກແຂວງ ທີ່ເດັກຫຼາຍຄົນຕ້ອງການການສະໜັບສະໜູນເປັນພິເສດ ເພື່ອຮຽນຮູ້ທັກສະພາສາລາວໃນຕອນເລີ່ມຕົ້ນການຮຽນຂອງເຂົາເຈົ້າ.



ທ່ານ ປອ ອົງເພັດ ອຸດົມລິດ, ຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສັງເກດການການສອນບົດຮຽນຝຶກເວົ້າພາສາລາວ



ທ່ານ ໄມໂຄ ຄາຣີ, ເລຂາເອກ ສະຖານທູດອົດສະຕຣາລີ ຊຸກຍູ້ໃຫ້ນັກຮຽນຜູ້ໜຸ່ມນ້ອຍສົນໃຈຕໍ່ການຮຽນ

ສຶກສາ, ວິທະຍາສາດ ແລະ ກິລາ
Education, Science and Sports Daily News



# ສື່ການຮຽນການສອນຝຶກເວົ້າພາສາລາວ ໄດ້ຊ່ວຍໃຫ້ນັກຮຽນ ໄດ້ຮຽນຮູ້ ແລະ ມີສ່ວນຮ່ວມໃນການຮຽນໃນຫ້ອງຮຽນຫຼາຍຂຶ້ນ

22/06/2026




ຄະນະຜູ້ແທນນໍາໂດຍ ທ່ານ ປອ. ວົງເພັດ ອຸດົມສິດ, ຜູ້ອໍານວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ), ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ (ສສກ) ແລະ ທ່ານ ໄມໄຄ ຄາຣີ, ເລຂາເອກສະຖານທູດອົດສະຕຣາລີ, ໄດ້ຢ້ຽມຢາມແຂວງຫຼວງນໍ້າທາ ໃນລະຫວ່າງວັນທີ 27 ຫາ 29 ເມສາ 2026 ເພື່ອຮັບຮູ້ກ່ຽວກັບການຈັດຕັ້ງປະຕິບັດສື່ການຮຽນການສອນຝຶກເວົ້າພາສາລາວ ຊັ້ນ ປ.1, ການຢ້ຽມຢາມດັ່ງກ່າວຍັງໄດ້ສະແດງໃຫ້ເຫັນວ່າ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂັ້ນໂຮງຮຽນ ຊ່ວຍໃຫ້ຄູອາຈານຈັດຕັ້ງປະຕິບັດການສອນບົດຮຽນຝຶກເວົ້າພາສາລາວ ແລະ ໃຫ້ການຊ່ວຍເຫຼືອນັກຮຽນທີ່ເວົ້າພາສາເຜົ່າທີ່ບໍ່ແມ່ນພາສາລາວຢູ່ເຮືອນ ໃຫ້ມີສ່ວນຮ່ວມ ແລະ ຮຽນຢູ່ໂຮງຮຽນໄດ້ຫຼາຍຂຶ້ນ. ຄະນະຜູ້ແທນປະກອບມີ ຜູ້ຕາງໜ້າຈາກສູນຄົ້ນຄວ້າພາສາລາວສໍາລັບຊົນເຜົ່າ, ສວສ, ກົມແຜນການ, ກົມສ້າງຄູ, ພະແນກປະຖົມ ແລະ ການສຶກສາຮຽນຮ່ວມ, ກົມສາມັນສຶກສາ, ສະຖານທູດອົດສະຕຣາລີ ແລະ ຜູ້ຊ່ຽວຊານ ແຜນງານບີຄວາ




ໃນລະຫວ່າງການຢ້ຽມຢາມ, ຄະນະຜູ້ແທນໄດ້ສັງເກດການສອນບົດຮຽນຝຶກເວົ້າພາສາລາວໃນໂຮງຮຽນປະຖົມຫຼາຍແຫ່ງ ແລະ ໄດ້ພົບປະກັບຄູອາຈານ, ຜູ້ອໍານວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດພາຍໃນ ແລະ ພາຍນອກ, ພະນັກງານຫ້ອງການສຶກສາທິການ ແລະ ກິລາ ເມືອງ (ສກມ) ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ (ສກຂ) ພ້ອມດ້ວຍທີມງານວິຊາການ ແລະ ທີມງານຜູ້ປະສານງານຫຼັກ ຈາກວິທະຍາໄລຄູ. ຄະນະຜູ້ແທນໄດ້ປຶກສາຫາລື ກ່ຽວກັບຄວາມຄືບໜ້າ ແລະ ສິ່ງທ້າທາຍ, ພ້ອມທັງການສະໜັບສະໜູນຂັ້ນໂຮງຮຽນ ແລະ ສິ່ງທີ່ຄູຕ້ອງການ ເພື່ອປັບປຸງຜົນການຮຽນຂອງເດັກນ້ອຍໃຫ້ດີຂຶ້ນຢ່າງຕໍ່ເນື່ອງ.

ສື່ການຮຽນການສອນຝຶກເວົ້າພາສາລາວ ຖືກອອກແບບມາເພື່ອຊ່ວຍເດັກທີ່ເລີ່ມເຂົ້າຮຽນ ແຕ່ບໍ່ສາມາດເວົ້າພາສາລາວໄດ້ດີເທື່ອ. ບົດຮຽນຝຶກເວົ້າພາສາລາວແມ່ນສື່ການສອນເສີມ, ແຕ່ສອດຄ່ອງກັບບົດຮຽນພາສາລາວໃນຫຼັກສູດ ຊັ້ນ ປ.1 ທີ່ໄດ້ສອນໃນຕອນບ່າຍຢ່າງໜ້ອຍສາມມື້ຕໍ່ອາທິດ ແລະ ແຕ່ລະບົດຮຽນຂອງທັງໝົດ 30 ບົດ ແມ່ນສອດຄ່ອງກັບບົດຮຽນວິຊາພາສາລາວ 30 ບົດ. ບົດຮຽນເຫຼົ່ານີ້ ໃຫ້ເວລາເພີ່ມ ແລະ ຊ່ວຍສະໜັບສະໜູນແກ່ເດັກເພື່ອເສີມສ້າງທັກສະພາສາລາວຂອງເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າສາມາດເຂົ້າໃຈສິ່ງທີ່ຄູສອນ, ສາມາດເຂົ້າຮ່ວມກິດຈະກໍາໃນຫ້ອງຮຽນ ແລະ ຮຽນວິຊາອື່ນໆໄດ້ດີຂຶ້ນ. ບົດຮຽນຝຶກເວົ້າພາສາລາວແມ່ນສ່ວນໜຶ່ງທີ່ສໍາຄັນຂອງຄວາມພະຍາຍາມ ເພື່ອສົ່ງເສີມການຮຽນຮ່ວມໃຫ້ຫຼາຍຂຶ້ນ ສໍາລັບເດັກທີ່ມາຈາກພື້ນຖານພາສາທີ່ຫຼາກຫຼາຍ.

ວິທີການດັ່ງກ່າວໄດ້ຖືກທົດລອງໃຊ້ເປັນຄັ້ງທໍາອິດໃນຫຼາຍແຂວງ ແລະ ຫຼັງຈາກຜົນໄດ້ຮັບໃນທາງທີ່ດີ ໄດ້ຖືກນໍາສະເໜີໃນລະດັບປະເທດໃນປີຮຽນ 2024–2025. ປັດຈຸບັນນີ້, ວິທີການດັ່ງກ່າວກໍາລັງຊ່ວຍນັກຮຽນ ຊັ້ນປ.1 ໃນໂຮງຮຽນຕ່າງໆໃນທຸກແຂວງ ທີ່ເດັກຫຼາຍຄົນຕ້ອງການການສະໜັບສະໜູນເປັນພິເສດ ເພື່ອຮຽນຮູ້ທັກສະພາສາລາວໃນຕອນເລີ່ມຕົ້ນການຮຽນຂອງເຂົາເຈົ້າ.

ພື້ນທີ່ໂຄສະນາ 300px x 250px
ໂທ:021 213161, 030 2800600

## ຂ່າວທີ່ກ່ຽວຂ້ອງ

- ສສກ ຮ່ວມກັບລັດຖະບານອົດສະຕຣາລີ ພັດທະນາຊຸດອຸປະກອນຊ່ວຍເຫຼືອຄູ ສໍາລັບ ການຮຽນການສອນ ເພື່ອຮັບມືຕໍ່ການປ່ຽນແປງດິນຟ້າອາກາດ ໃນການສຶກສາຂັ້ນປະຖົມ
- ສື່ການຮຽນການສອນຝຶກເວົ້າພາສາລາວ ໄດ້ຊ່ວຍໃຫ້ນັກຮຽນ ໄດ້ຮຽນຮູ້ ແລະ ມີສ່ວນຮ່ວມໃນການຮຽນໃນຫ້ອງຮຽນຫຼາຍຂຶ້ນ
- ປອກຕຸຍການ ຟອມພົດ ປະເດີມສະໜາມບານໂລກ 2026 ເຮັດໄດ້ພຽງສະເໝີ ຄອງໂກ 1-1
- "ແຮຣີ ເຄນ" ເໝົາສອງປະຕູ ພາ ອັງກິດ ໄລ່ຕ້ອນ ໂຄຣເອເຊຍ 4-2 ຄວ້າ 3 ແຕ້ມທໍາອິດ ປະເດີມບານໂລກ 2026
- ກຽມເປີດແຂ່ງຂັນກິລາລົດຖີບ ຊີງແຊ້ມປະເທດລາວ ປະຈໍາປີ 2026 ທ້າຍເດືອນມິຖຸນານີ້
- ອັງກິດ ກຽມຫ້າມເດັກອາຍຸຕໍ່າກວ່າ 16 ປີ ນໍາໃຊ້ໂຊຊຽວມີເດຍ ເພື່ອປົກປ້ອງເຍົາວະຊົນ